ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 21 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 24 MAY 2016

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 04495
ວັນທີ 25 MAY 2016
ໂທລະສັບ 021 217770

## ບົດບັນທຶກກອງປະຊຸມ
## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ເມສາ ປີ 2016

ໃນຕອນບ່າຍຂອງວັນທີ 6 ພຶດສະພາ 2016 ເວລາ 13:30 ໂມງ ໄດ້ມີການຈັດກອງປະຊຸມສ່ອງແສງວຽກງານສາຍລັດ ປະຈຳເດືອນ ເມສາ ປີ 2016 ຂຶ້ນ ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການເປັນປະທານໂດຍທ່ານ **ສອນໄຊ ສິດພະໄຊ** ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີບັນດາຄະນະກົມ, ທຽບເທົ່າກົມ, ຄະນະອຳນວຍການຈາກບັນດາທະນາຄານທຸລະກິດລັດ (ທທກ) ແລະ ຜູ້ຕາງໜ້າບັນດາກົມເຂົ້າຮ່ວມ ລາຍລະອຽດດັ່ງລາຍຊື່ທີ່ໄດ້ຄັດຕິດມາພ້ອມນີ້.

ຜ່ານການລາຍງານຈາກບັນດາກົມ, ທຽບເທົ່າກົມ ແລະ ທະນາຄານທຸລະກິດລັດ ທ່ານ ປະທານກອງປະຊຸມໄດ້ມີທິດທາງແກ້ໄຂວຽກງານຫຼາຍບັນຫາຕາມການລາຍງານ ແລະ ການສະເໜີຈາກແຕ່ລະພາກສ່ວນ ດັ່ງນີ້:

I. ຄຳເຫັນຕໍ່ການລາຍງານ

1. ຕໍ່ກັບການຂະຫຍາຍສາຂາຂອງທະນາຄານທຸລະກິດ ໃນແງ່ດີແມ່ນເຫັນວ່າເສດຖະກິດໄດ້ມີການຂະຫຍາຍຕົວ ແຕ່ໃນແງ່ການຄຸ້ມຄອງ ແລະ ການແຂ່ງຂັນກັບທະນາຄານທຸລະກິດລັດ ເຫັນວ່າທ່າແຮງເຂົາເຈົ້າຈະຫຼາຍກວ່າ ຊຶ່ງເປັນສິ່ງທ້າທາຍຫຼາຍ;
2. ກ່ຽວກັບການສະເໜີໃຫ້ພະນັກງານເຂົ້າຮ່ວມຝຶກອົບຈາກສຳນັກງານ ຄຄຊ ແມ່ນເຫັນວ່າພວກເຮົາຈະຕ້ອງໄດ້ລົງທຶນ ຊຶ່ງບັນຫານີ້ແມ່ນເຫັນດີສະໜັບສະໜູນ;
3. ສະເໜີທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກ່ອນຈະອອກຜະລິດຕະພັນໃໝ່ ແມ່ນໃຫ້ຄົ້ນຄວ້າມີນິຕິກຳໃນການຄຸ້ມຄອງກ່ອນ;
4. ສຳລັບການສະເໜີຂອງໂຮງພິມທະນະບັດ ກ່ຽວກັບບັນຫາສາງເກັບເງິນ ແມ່ນໃຫ້ກົມກ່ຽວຂ້ອງ (ກົມເງິນຕາ) ຄົ້ນຄວ້າບ່ອນຮັບຮອງຂອງສາງ ແລະ ກ່ຽວກັບການສະເໜີຂໍສະໜັບສະໜູນການພິມແຊັກຈາກ ທຫລ ແລະ ທະນາຄານທຸລະກິດລັດ ໃຫ້ຫ້ອງການກວດກາຄືນຈຳນວນແຊັກທີ່ຍັງເຫຼືອ ພ້ອມທັງສະເໜີທະນາຄານທຸລະກິດລັດ ຄົ້ນຄວ້າການສະໜັບສະໜູນ;
5. ສຳລັບທະນາຄານພັດທະນາລາວ ແມ່ນເຫັນວ່າຍັງພົບຄວາມຫຍຸ້ງຍາກການລະດົມເງິນຝາກ ຊຶ່ງຍັງຫຼຸດລົງຕໍ່ເນື່ອງ;

6. ກ່ຽວກັບການຖືຮຸ້ນຂອງທະນາຄານສົ່ງເສີມກະສິກໍາ ໃນບໍລິສັດຫຼັກຊັບ ໃຫ້ເບິ່ງຄືນການດໍາເນີນງານຂອງບໍລິສັດດັ່ງກ່າວ ຖ້າຫາກການດໍາເນີນງານບໍ່ດີ ແມ່ນສະເໜີທະນາຄານຖອນຮຸ້ນອອກ ເພື່ອໄປລົງທຶນສິ່ງທີ່ມີປະສິດທິຜົນອື່ນດີກວ່າ;

7. ກ່ຽວກັບການສະເໜີປັບປຸງການບໍລິການເຄຍລິ້ງຂອງກົມບໍລິການ ແມ່ນເຫັນດີໃຫ້ຫາວິທີແກ້ໄຂ ເນື່ອງຈາກເຫັນວ່າທະນາຄານທຸລະກິດເພີ່ມຂຶ້ນຫຼາຍ ສົ່ງຜົນໃຫ້ພະນັກງານທະນາຄານທຸລະກິດທີ່ມາເຄຍລິ້ງ ເພີ່ມຂຶ້ນແຕ່ສະຖານທີ່ເຫັນວ່າບໍ່ພຽງພໍ;

8. ໃຫ້ທະນາຄານນະໂຍບາຍ ເອົາໃຈໃສ່ການເຮັດສັນຍາກັບ ບໍລິສັດ TK ໃຫ້ເປັນໄປຕາມລະບຽບກົດໝາຍຢ່າງເຄັ່ງຄັດ;

9. ສໍາລັບສະຖາບັນການທະນາຄານ ທີ່ຈະປັບປຸງໃຫ້ມີປະລິນຍາຕີ ແມ່ນເຫັນດີ ພ້ອມທັງການຍາດແຍ່ງທຶນຈາກພາກສ່ວນຕ່າງໆ;

10. ໃຫ້ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເບິ່ງຄືນກ່ຽວກັບບັນຫາການຈະສົ່ງມອບຂືວທ່າງ່ອນຄືນ, ພ້ອມທັງໃຫ້ລາຍງານງົບປະມານທີ່ໃຊ້ໃນການສ້ອມແປງຂືວ ໃຫ້ນະຄອນຫຼວງວຽງຈັນຮັບຊາບ;

11. ກ່ຽວກັບການແຊກແຊງຕະຫຼາດ ຕາມການລາຍງານຈາກກົມນະໂຍບາຍເງິນຕາ ແມ່ນໃຫ້ປະຕິບັດແຕ່ລະໄລຍະ ພິຈາລະນາວ່າເໝາະສົມ;

12. ສໍາລັບການຮັບຊ່ວຍເຫຼືອຕ່າງໆ ແມ່ນໃຫ້ພິລະນາວ່າອັນໃດຄວນຮັບ ຫຼື ອັນໃດບໍ່ຄວນຮັບ ສໍາລັບ ທສກ ກ່ຽວກັບການຮ່ວມເປັນຕົວແທນຮັບຊໍາລະເງິນ ແມ່ນໃຫ້ມີສະຕິ;

13. ໃຫ້ກົມບັນຊີການເງິນ ພິຈາລະນາກ່ຽວກັບການລົງບັນຊີຕ່າງໆ ໃຫ້ມີການປະສານກັບກົມກ່ຽວຂ້ອງຄັກແນ່ເພື່ອໃຫ້ສາມາດລົງບັນຊີໄດ້ຢ່າງຖືກຕ້ອງ;

14. ສໍາລັບການລາຍງານຈາກກົມກວດກາພາຍໃນ ເຫັນວ່າມີຫຼາຍດ້ານຕ້ອງໄດ້ປັບປຸງ ທັງໜ້າວຽກແນວຄິດ ແລະການຈັດຕັ້ງ.

## II. <u>ທິດຊີ້ນໍາວຽກງານໃນເດືອນຕໍ່ໄປ</u>

1. ໃຫ້ເອົາໃຈໃສ່ສືບຕໍ່ສຶກສາອົບຮົມວຽກງານການເມືອງ-ແນວຄິດຕໍ່ພະນັກງານ ພ້ອມທັງປັງປຸງການຈັດຕັ້ງປະຕິບັດວຽກງານໃຫ້ດີຂຶ້ນໄປພ້ອມກັນ;
2. ໃຫ້ສືບຕໍ່ປັງປຸງດໍາລັດວ່າດ້ວຍໂຮງຊວດຈໍາ ຕາມມະຕິຂອງກອງປະຊຸມລັດຖະບານ ປະຈໍາເດືອນ 2/2016;
3. ສືບຕໍ່ສົມທົບກັບກະຊວງພາຍໃນ ໃນການປັບປຸງດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ ແລະ ຕິດຕາມການສະເໜີຂໍສ້າງຕັ້ງ ທຫລ ພາກເໜືອທີ່ແຂວງຊຽງຂວາງ;
4. ໃຫ້ກະກຽມກອງປະຊຸມສະພາບໍລິຫານ ທຫລ ສະໄໝສາມັນ ຄັ້ງທີ I ປະຈໍາປີ 2016 ຄາດວ່າຈະຈັດໃນເດືອນ 6/2016;
5. ສືບຕໍ່ສັງລວມແຜນງານ-ໂຄງການ 5 ປີ ແລະ ສືບຕໍ່ເຮັດວຽກກັບຄະນະກວດສອບແຫ່ງລັດ ໃຫ້ສໍາເລັດ.

ກອງປະຊຸມໄດ້ປິດລົງໃນ ເວລາ 15:15 ໂມງ ໃນວັນດຽວກັນ.

| | |
|---|---|
| ປະທານກອງປະຊຸມ | ຜູ້ບັນທຶກ |
| ສອນໄຊ ສິດພະໄຊ | |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------===000===------

ທະນາຄານແຫ່ງ ສປປ ລາວ

ລາຍຊື່ເຂົ້າຮ່ວມກອງປະຊຸມສ່ອງແສງວຽກງານສາຍລັດ ປະຈຳເດືອນ 04/2016
ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທຫລ ເວລາ 13:30-16:00 ໂມງ ວັນທີ 06/05/2016

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ຕຳແໜ່ງ | ລາຍເຊັນ |
|---|---|---|---|---|
| 1 | ທ່ານ ສອນໄຊ ສິດພະໄຊ | | ຮອງຜູ້ວ່າການ ທຫລ | |
| 2 | ~~ທ່ານ ພຸດທະໄຊ ສີອິໄລ~~ | ກົມຄຸ້ມຄອງທະນາຄານທຸລະກິດ | ຫົວໜ້າກົມ | |
| 3 | ທ່ານ ນ. ພາສີ ພົມມະກອນ | ຫ້ອງການ | ຫົວໜ້າກົມ | |
| 4 | ທ່ານ ສົມຕີ ພົນເມືອງລາວ | ໂຮງພິມທະນະບັດ | ຫົວໜ້າກົມ | |
| 5 | ທ່ານ ນ. ແສງດາວວີ ວົງຄຳຊາວ | ກອງທຶນປົກປ້ອງຜູ້ຝາກເງິນ | ຜູ້ອຳນວຍການ | |
| 6 | ທ່ານ ວັນຄຳ ວໍຣະວົງ | ຕະຫຼາດຫຼັກຊັບລາວ | ຜູ້ອຳນວຍການ | |
| 7 | ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ | ກົມບັນຊີ-ການເງິນ | ຫົວໜ້າກົມ | |
| 8 | ທ່ານ ນ. ສາຍສະໝອນ ຈັນທະຈັກ | ສຳນັກງານ ຄຄຊ | ຫົວໜ້າສຳນັກງານ | |
| 9 | ທ່ານ ພານຸສັກ ແກ່ນວົງພະຈັກ | ກົມຈັດຕັ້ງ ແລະ ພະນັກງານ | ຮອງຫົວໜ້າກົມ | |
| 10 | ທ່ານ ສົມມຸດ ແກ້ວມະນີ | ກົມກວດກາພາຍໃນ | ຮອງຫົວໜ້າກົມ | |
| 11 | ທ່ານ ພູຊົງ ຈັນທະຈັກ | ທ/ຄ ການຄ້າຕ່າງປະເທດລາວ ມ/ຊ | ຜູ້ອຳນວຍການ | |